# ທັດສະນະຂອງອົງການຈັດຕັ້ງສັງຄົມ/ອົງການພັດທະນາ

## ວາລະທີ 3: ການຮ່ວມມື ແລະ ການຈັດຕັ້ງປະຕິບັດກ່ຽວກັບການລົງທຶນດ້ານກະສິກຳ ແລະ ປ່າໄມ້ທີ່ມີຄວາມຮັບຜິດຊອບ

**ທອງດຳ ພົງພິຈິດ**

**ຕ່າງໜ້າອົງການຈັດຕັ້ງສັງຄົມ/ອົງການພັດທະນາ**

**ກອງປະຊຸມຫຼາຍຝ່າຍກ່ຽວກັບການລົງທຶນດ້ານກະສະິກຳ ແລະ ປ່າໄມ້ທີ່ມີຄວາມຮັບຜິດຊອບ (RAI) ຂັ້ນສູນກາງ**

**ວັນທີ 10 ພະຈິກ 2021, ໂດຍທາງໄກ (zoom)**

# ບາງອົງການຈັດຕັ້ງສັງຄົມ/ອົງການພັດທະນາທີ່ຮ່ວມຈັດຕັ້ງປະຕິບັດກິດຈະກຳກ່ຽວກັບການລົງທຶນດ້ານກະສິກຳ ແລະ ປ່າໄມ້ທີ່ມີຄວາມຮັບຜິດຊອບ

**INGOs:**

- ✓ FAO
- ✓ GIZ
- ✓ Helvetas/Cope
- ✓ VFI/LIFE
- ✓ OXFAM
- ✓ LIWG
- ✓ Other…

**National CSOs:**

- ✓ SAEDA
- ✓ LaoDHRRA
- ✓ CDEA
- ✓ PAKA
- ✓ PSNUA
- ✓ LFN/CLICK
- ✓ Other…

# 3 ຜົນສຳເລັດຕໍ່ຂອງການລົງທຶນທີ່ມີຄວາມຮັບຜິດຊອບ

1. ການຈັດກອງປະຊຸມປະເມີນຄວາມສາມາດ RAI ໃນລາວ ແລະ ການສ້າງຄວາມສາມາດຕາມບູລິມະສິດຄວາມຕ້ອງການຂອງກຸ່ມເປົ້າໝາຍເຊັ່ນ: ພາກລັດ (ສູນກາງ-ທ້ອງຖິ່ນ), ເອກະຊົນ,ອົງການພັດທະນາສາກົນ, ອົງການຈັດຕັ້ງສັງຄົມ ລວມເຖິງຊຸມຊົນ;
2. ຄົ້ນຄວ້າ ແລະ ກໍລະນີສຶກສາກ່ຽວກັບການລົງທຶນ, ສັນຍາກະສິກຳ, FPIC. ການສ້າງ ແລະ ພັດທະນາປື້ມຄູ່ມື, ຜະລິດສື່ ແລະ ບັນດາເຄື່ອງມືການຝຶກອົບຮົມໃຫ້ເຂົ້າໃຈງ່າຍ ໃນການເຜີຍແຜ່ຂໍ້ມູນຕ່າງໆທີ່ກ່ຽວພັນກັບການລົງທຶນດ້ານກະສິກຳແບບມີຄວາມຮັບຜິດຊອບ ເຊັ່ນ: ສ້າງຄູ່ມືພາກສະໜາມ, ຄູ່ມືສຳຫຼັບຜູ້ປະກອບການ ແລະ ຊຸມຊົນ, ແຜ່ນພັບ, ຈົດໝາຍຂ່າວ, ປະຕິທິ, ໂພສເຕ, ວີດີໂອ ແລະ ອື່ນໆ ສາມາດເຂົ້າເຖິງທາງ ເວັບຊາຍ ແລະ ສະບັບພິມ;
3. ການເຮັດວຽກຮ່ວມພາກລັດຂັ້ນສູນກາງ-ທ້ອງຖິ່ນ ແລະ ພາກເອກະຊົນ/ລົງທຶນ ແລະ ການມີສ່ວນຮ່ວມຂອງຊຸມຊົນ, ຮັກສາສິ່ງແວດລ້ອມ ແລະ ການຈັດສັນຊັບຍາກອນທີ່ດິນແບບຍືນຍົງ.

# 3 ສິ່ງທ້າທາຍຕົ້ນຕໍຂອງການລົງທຶນທີ່ມີຄວາຮັບຜິດຊອບ

1. ຂາດງົບປະມານ, ບຸກຄະລາກອນ, ແຜນການຕິດຕາມ ແລະ ປະເມີນຢ່າງຕໍ່ເນື່ອງທີ່ເປັນລະບົບ ແລະ ເອກະພາບກັນຂອງພາກລັດ ລວມທັງການລົງເຜີຍແຜ່ໃນຊຸມຊົນຍັງຈຳກັດ ເຮັດໃຫ້ຂໍ້ມູນຍັງບໍ່ທົ່ວເຖິງໂດຍສະເພາະແມ່ນ ຊາວກະສິກອນ ແລະ ຊຸມຊົນທີ່ຢູ່ເຂດຫ່າງໄກ;
2. ພະນັກງານໃນຂັ້ນທ້ອງຖິ່ນ ແລະ ຊຸມຊົນ ແມ່ນຍັງບໍ່ກຳແໜ້ນກົດໝາຍ, ນິຕິກຳຕ່າງໆ ແລະ ແຜນການ ເຮັດໃຫ້ທ້ອງຖິ່ນບໍ່ຮັບຮູ້ຂໍ້ມູນ. ຍັງຕິດພັນກັບຫຼາຍຂະແໜງການ, ການປະສານງານ ແລະ ສິ່ງຜົນໃຫ້ຈັດຕັ້ງປະຕິບັດບໍ່ເປັນເອກະພາບ ແລະ ສັບສົນ;
3. ພາກລັດຍັງບໍ່ຈະແຈ້ງໃນການກຳນົດເຂດການສົ່ງເສີມການລົງທຶນກະສິກຳລະອຽດ ໃນແຕ່ລະທ້ອງຖິ່ນທີ່ຊັດເຈນ ເຮັດໃຫ້ມີການລົງທຶນບໍ່ເໝາະກັບພື້ນທີ່ຕົວຈິງ ແລະ ການຈັບຈອງດິນຂອງນັກລົງທຶນ ໂດຍບໍ່ໄດ້ຮັບການອະນຸຍາດຈາກພາກລັດກ່ອນ ຫຼື ປ່ຽນກິດຈະກຳ ຫຼື ການຈັບຈອງດິນຂາຍກິດຈະການ.

# 3 ບຸລິມະສິດໃນການຈັດຕັ້ງປະຕິບັດວຽກງານພາຍໃນ 5 ປີ

1. ຈັດສັນງົບປະມານ, ບຸກຄະລາກອນ, ແຜນການຕິດຕາມ ແລະ ປະເມີນຢ່າງຕໍ່ເນື່ອງທີ່ເປັນລະບົບ, ເອກະພາບກັນ, ກົນໄກການປະສານຫຼາຍຂະແໜງການຂອງພາກລັດສູນກາງ-ທ້ອງຖິ່ນ ແລະ ການມີສ່ວນຮ່ວມຂອງອົງການຄູ່ຮ່ວມພັດທະນາ (ການວາງແຜນ-ການຕິດຕາມ-ການປະເມີນຜົນ-ການລາຍງານ);
2. ສ້າງຄວາມສາມາດໃຫ້ພະນັກງານໃນຂັ້ນທ້ອງຖິ່ນ ແລະ ຊຸມຊົນ ລວມທັງການເຂົ້າເຖິງຂໍ້ມູນໄດ້ງ່າຍ ໂດຍສະເພາະແມ່ນບັນນິຕິກຳ ແລະ ເຄື່ອງມືຕ່າງໆ;
3. ກຳນົດເຂດການສົ່ງເສີມການລົງທຶນກະສິກຳທີ່ລະອຽດ ແລະ ເໝາະສົມກັບແຕ່ລະທ້ອງຖິ່ນທີ່ຊັດເຈນ ລວມທັງການຮັກສາສິ່ງແວດລ້ອມ, ຊັບພະຍາກອນທຳມະຊາດ (ດິນ ປ່າໄມ້ ນ້ຳ ແລະ ຊີວະນາໆພັນ) ແລະ ການຄວບຄຸມການນຳໃຊ້ສານເຄມີ/ຢາປາບສັດຕູພືດທີ່ເປັນອັນຕະລາຍ.